**ມິຊຊາອາທິດທີ 33 ການົດທຳມະດາປີ C**

**ວັນທີ 17 ພະຈິກ 2019**



**ພຣະວໍລະສານໂດຍນັກບຸນລູກາ 21, 5-11**

ໃນເວລານັ້ນ, ມີບາງຄົນທູນພຣະອົງເຖິງເລື່ອງພຣະວິຫານວ່າປະດັບປະດາດ້ວຍແຜ່ນຫີນອັນງົດງາມແລະມີສິ່ງຂອງຖະຫວາຍແກ້ບະບົນຕ່າງໆ. ພຣະອົງຈຶ່ງກ່າວວ່າ: ທຸກສິ່ງທີ່ພວກເຈົ້າເຫັນແລະຊົມຢູ່ນີ້ສັກວັນໜຶ່ງຈະບໍ່ມີຫຍັງເຫລືອ, ກ້ອນຫີນຊ້ອນກັນກໍຈະບໍ່ມີເລີຍ, ທຸກສິ່ງຈະເພພັງລົງໝົດ. ພວກສາວົກຈຶ່ງທູນຖາມພຣະອົງວ່າ: ພຣະອາຈານເອີຍ, ເຫດການເຫລົ່ານັ້ນຈະເປັນມາເວລາໃດ? ຈະມີເຄື່ອງໝາຍອັນໃດບອກໃຫ້ຮູ້ວ່າເຫດການນັ້ນໃກ້ເຂົ້າມາແລ້ວ?

ພຣະອົງກ່າວຕອບວ່າ: ຈົ່ງລະວັງຢ່າໃຫ້ຜູ້ໃດມາຕົວະຫລອກພວກເຈົ້າ. ຍ້ອນວ່າຈະມີຄົນເປັນອັນມາກມາໃນນາມຂອງເຮົາແລະອ້າງຕົວວ່າ: ແມ່ນເຮົານີ້ແລ ແລະວັນເວລາໃກ້ເຂົ້າມາແລ້ວ. ພວກເຈົ້າຢ່າເຊື່ອຕາມຄວາມເວົ້າຂອງພວກເຂົາ. ເມື່ອພວກເຈົ້າໄດ້ຍິນເສິກທາງເໜືອ ເສືອທາງໃຕ້ແລະການປະຕິວັດຕ່າງໆ ກໍຢ່າຕົກໃຈ. ສິ່ງເຫລົ່ານີ້ຈະຕ້ອງເກີດມາກ່ອນ, ແຕ່ວ່າວາລະສຸດທ້າຍຍັງບໍ່ທັນມາຮອດດອກ. ແລ້ວພຣະອົງກ່າວຕໍ່ໄປວ່າ: ຈະມີການຂັດສູ້ກັນລະຫວ່າງຊາດກັບຊາດ, ອານາຈັກກັບອານາຈັກ. ຈະເກີດແຜ່ນດິນສະເທືອນຢ່າງແຮງ. ຈະມີໂລກພະຍາດລະບາດແລະການອຶດຢາກຢູ່ທົ່ວທຸກແຫ່ງ. ຈະເກີດມີສິ່ງແປກປະຫລາດທີ່ເປັນຕາຢ້ານແລະມີເຄື່ອງໝາຍອັນຍິ່ງໃຫຍ່ໃນທ້ອງຟ້າ.

ແຕ່ກ່ອນອື່ນ, ເຂົາຈະຈັບກຸມແລະບຽດບຽນຂົ່ມເຫັງພວກເຈົ້າ. ຈະມອບພວກເຈົ້າໃຫ້ໂຮງທັມແລະໃສ່ຄຸກພວກເຈົ້າ. ເຂົາຈະຟ້ອງຫາພວກເຈົ້າຕໍ່ໜ້າບັນດາກະສັດແລະຜູ້ປົກຄອງທັງຫລາຍຍ້ອນນາມຂອງເຮົາ. ສິ່ງເຫລົ່ານີ້ຈະເປັນໂອກາດໃຫ້ພວກເຈົ້າໄດ້ເປັນພິຍານຢັ້ງຢືນເຖິງເຮົາ. ພວກເຈົ້າຈົ່ງຈຳໃສ່ໃຈໃຫ້ດີວ່າ ພວກເຈົ້າບໍ່ຕ້ອງຕຽມຄຳຕອບໂຕ້ເພື່ອປ້ອງກັນຕົວເລີຍ. ຍ້ອນວ່າເຮົາເອງຈະເປັນຜູ້ໃຫ້ຄຳເວົ້າແລະຄວາມສະຫລາດແກ່ພວກເຈົ້າ ຈົນວ່າບໍ່ມີສັດຕູຄົນໃດຈະສາມາດຕໍ່ສູ້ຫລືຄັດຄ້ານໄດ້. ພໍ່ແມ່, ອ້າຍນ້ອງ, ຍາດພີ່ນ້ອງແລະມິດສະຫາຍຈະສົ່ງມອບຂາຍພວກເຈົ້າ. ເຂົາຈະຂ້າຫລາຍຄົນໃນພວກເຈົ້າ. ຄົນທັງຫລາຍຈະຄຽດຊັງພວກເຈົ້າຍ້ອນນາມຂອງເຮົາ. ແຕ່ວ່າຜົມຢູ່ເທິງຫົວຂອງພວກເຈົ້າຈະບໍ່ຫລົ່ນເສຍໄປໄດ້ແມ່ນແຕ່ເສັ້ນດຽວ. ພວກເຈົ້າຈະເອົາຊີວິດຮອດໄດ້ ກໍດ້ວຍອາໄສຄວາມອົດທົນຂອງພວກເຈົ້າ.

ນີ້ແມ່ນວາຈາຂອງພຣະກຣິສໂຕເຈົ້າ

**ບົດແບ່ງປັນ: ລກ 21, 5-11**

ຖ້າເບິ່ງວັນເວລາໃນປະຕິທິນສາກົນ, ພວກເຮົາກຳລັງຫຍັບຍ້າຍມາຮອດຕອນທ້າຍຂອງປີ 2019 ແລະປີ 2020 ກຳລັງກ້າວເຂົ້າມາ. ປີໜຶ່ງຜ່ານໄປກໍມີຫລາຍສິ່ງຫລາຍຢ່າງທີ່ເກີດເປັນມາໃນຊີວິດຂອງພວກເຮົາ: ມີທັງສິ່ງດີ ແລະສິ່ງຮ້າຍ, ຄວາມສຳເລັດແລະຄວາມລົ້ມເຫລວ, ຄວາມສິ້ນຫວັງແລະຄວາມຍິນດີ. ແຕ່ພວກເຮົາຜ່ານຜ່າສິ່ງເຫລົ່ານີ້ມາຮອດວັນນີ້ໄດ້ກໍດ້ວຍອາໄສພຣະຄຸນຂອງພຣະເຈົ້າແລະຄວາມອົດທົນພາກພຽນໃນຊີວິດຄວາມເຊື່ອຂອງພວກເຮົາ.

ດັ່ງດຽວກັນ, ຖ້າພວກເຮົາສັງເກດປະຕິທິນແຫ່ງປີພິທີກຳຂອງສາດສະໜາກາໂທລິກ, ພວກເຮົາກໍຈະເຫັນວ່າພວກເຮົາກຳລັງມາຮອດຕອນທ້າຍຂອງປີພິທີກຳເຊັ່ນດຽວກັນ. ເພາະອາທິດນີ້ເປັນອາທິດທີ 33 ການົດທຳມະດາປີ C ແລະອາທິດຕໍ່ໄປຈະເປັນອາທິດສຸດທ້າຍຂອງປີພິທີກຳນີ້ ຊຶ່ງພຣະກຣິສຕະຈັກສົມໂພດພຣະກຣິສໂຕກະສັດແຫ່ງໂລກຈັກກະວານ. ໃນຕອນທ້າຍຂອງປີພິທີກຳນີ້, ພຣະກຣິສຕະຈັກຈຶ່ງຖືໂອກາດເຊື້ອເຊີນພວກເຮົາບໍ່ພຽງແຕ່ເບິ່ງຄືນເຫດການຕ່າງໆທີ່ໄດ້ເກີດເປັນມາໃນພຣະກຣິສຕະຈັກກໍຄືໃນຊີວິດຂອງພວກເຮົາຈົນເຖິງວັນນີ້, ແຕ່ພຣະກຣິສຕະຈັກຍັງພ້ອມກັບພວກເຮົາແນມໄປທາງໜ້າໄປສູ່ວັນທີ່ພຣະເຢຊູເຈົ້າຈະສະເດັດກັບມາອີກຄັ້ງໜຶ່ງ. ແນ່ນອນ, ເມື່ອເວົ້າເຖິງວັນທີ່ພຣະເຢຊູເຈົ້າຈະສະເດັດກັບມາອີກຫລາຍຄົນກໍຄິດຫາວັນສິ້ນໂລກ. ແລະຄຳຖາມທີ່ຕາມມາກໍຄື ວັນນັ້ນຈະມາຮອດເມື່ອໃດ? ເວລາໃດ? ແລະພວກເຮົາຈະຕຽມພ້ອມຢ່າງໃດ? ຄຳຖາມເຫລົ່ານີ້ຂອງພວກເຮົາກໍຄືຄຳຖາມຂອງພວກສາວົກໃນສະໄໝຂອງພຣະເຢຊູເຈົ້າ, ເມື່ອພຣະອົງກ່າວເຖິງພຣະວິຫານຈະຖືກທຳລາຍແລະຈະບໍ່ມີກ້ອນຫີນຊ້ອນກັນອີກໃນຕອນຕົ້ນຂອງພຣະວໍລະສານວັນນີ້. ແທນທີ່ພຣະເຢຊູເຈົ້າຈະຕອບຄຳຖາມຂອງພວກສາວົກກໍຄືຂອງພວກເຮົາເຖິງວັນເວລາທີ່ເຫດການນັ້ນຈະມາເຖິງ, ພຣະອົງພັດບອກພວກສາວົກກໍຄືພວກເຮົາໃຫ້ຕື່ນເຝົ້າແລະລະວັງຢູ່ສະເໝີ. ໝາຍຄວາມວ່າແນວໃດ? ໝາຍວ່າເຫດການທີ່ພຣະເຢຊູເຈົ້າກ່າວໃນພຣະວໍລະສານວັນນີ້ບໍ່ວ່າຈະເປັນເສິກສົງຄາມ, ການບັງບຽດຂົ່ມເຫັງ, ການຟ້ອງຮ້ອງກັນແລະໄພທຳມະຊາດຕ່າງໆບໍ່ແມ່ນສິ່ງທີ່ຈະເປັນມາໃນອານາຄົດແຕ່ເປັນເຫດການທີ່ອາດເກີດຂຶ້ນກັບພວກເຮົາໃນທຸກເມື່ອທຸກເວລາ. ແລະບາງຄັ້ງ, ເຫດການເຫລົ່ານີ້ອາດທຳໃຫ້ພວກເຮົາຢ້ານກົວ, ສິ້ນຫວັງແລະຂາດຄວາມເຊື່ອ. ດັ່ງນັ້ນ, ສິ່ງທີ່ພວກເຮົາຄວນກະທຳຄືຕັ້ງໝັ້ນໃນຄວາມເຊື່ອແລະພາກພຽນອົດທົນໃນຊີວິດຂອງພວກເຮົາຢູ່ສະເໝີ. ເພາະພຣະເຢຊູເຈົ້າຜູ້ທີ່ພວກເຮົາເຊື່ອໄດ້ໄຊຊະນະໂລກແລ້ວ. ຖ້າພວກເຮົາເຊື່ອໝັ້ນໃນພຣະອົງ ພວກເຮົາກໍຈະໄດ້ຮອດຊີວິດ.

ໂອກາດທ້າຍປີຂອງພິທີກຳນີ້, ເປັນເວລາໃຫ້ພວກເຮົາໄດ້ໂມທະນາຄຸນພຣະເຈົ້າສຳລັບພຣະຄຸນແລະຊີວິດທີ່ພຣະອົງໄດ້ປະທານໃຫ້ພວກເຮົາຕະຫລອດປີໜຶ່ງທີ່ຜ່ານມາ. ໃນເວລາດຽວກັນກໍເປັນໂອກາດໃຫ້ພວກເຮົາໄດ້ເບິ່ງຄືນຊີວິດຄວາມເຊື່ອຂອງພວກເຮົາວ່າ : ຂ້ອຍໄດ້ສຳພັດເຖິງຄວາມຮັກຂອງພຣະເຢຊູເຈົ້າໃນຊີວິດຂອງຂ້ອຍບໍ? ໃນເວລາຖືກທົດສອບ, ໃນເວລາພົບກັບອຸປະສັກທີ່ແກ້ບໍ່ໄດ້ ຂ້ອຍຍັງເຊື່ອໝັ້ນໃນພຣະເຢຊູເຈົ້າບໍ? ຂ້ອຍໄດ້ໃຫ້ພຣະເຢຊູເຈົ້ານຳພາຊີວິດຂ້ອຍບໍ? ຂ້ອຍໄດ້ພາກພຽນໃນຄຳພາວະນາເວລາຖືກທົດສອບບໍ? ຂ້ອຍໄດ້ເຊື່ອໝັ້ນວ່າພຣະເຢຊູເຈົ້າຈະຮັບຟັງຄຳພາວະນາຂອງຂ້ອຍບໍ? ອາແມນ

ຄຸນພໍ່ ອັງຕວນ ກຽດຕິສັກ